**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ຄະນະກຳມະການປົກຄອງແຂວງ

ເລກທີ...01......./ປຄປຂ
ອັດຕະປື, ວັນທີ 25 ກຸມພາ 2026

# ຄຳສັ່ງ
## ວ່າດ້ວຍການເພີ່ມທະວີຄວາມຮັບຜິດຊອບໃນການຄຸ້ມຄອງ ປົກປັກຮັກສາປ່າໄມ້, ທີ່ດິນປ່າໄມ້, ການປ້ອງກັນສະກັດກັ້ນໄຟໄໝ້ລາມປ່າ ແລະ ຄວບຄຸມມົນລະພິດທາງອາກາດ (ຝຸ່ນ PM 2.5) ໃນຂອບເຂດທົ່ວແຂວງອັດຕະປື

**ເຖິງ: ພະແນກການ, ອົງການທຽບເທົ່າພະແນກການອ້ອມຂ້າງແຂວງ, ກອງບັນຊາການ ປກຊ-ປກສ, ຄະນະກຳມະການປົກຄອງເມືອງ 05 ຕົວເມືອງ ແລະ ການຈັດຕັ້ງບ້ານ.**

- ອີງຕາມ ມາດຕາທີ 20, ຂໍ້ທີ 16 ຂອງກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ (ສະບັບປັບປຸງ) ເລກທີ 78/ສພຊ, ລົງວັນທີ 20 ມີນາ 2025;
- ອີງຕາມ ຄຳສັ່ງຂອງກະຊວງກະສິກຳ ແລະ ປ່າໄມ້ ກ່ຽວກັບການເພີ່ມທະວີຄວາມຮັບຜິດຊອບສະກັດກັ້ນໄຟໄໝ້ລາມປ່າ ແລະ ການຖາງປ່າເຮັດໄຮ່, ບຸກລຸກເນື້ອທີ່ປ່າໄມ້ເພື່ອທຳການຜະລິດ ສະບັບເລກທີ 0191/ກປ, ລົງວັນທີ 26 ມັງກອນ 2022;
- ອີງຕາມ ຄຳສັ່ງຂອງທ່ານເຈົ້າແຂວງອັດຕະປື ວ່າດ້ວຍ ການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ປ່າໄມ້, ທີ່ດິນປ່າໄມ້, ຕ້ານ ແລະ ສະກັດກັ້ນ ການບຸກລຸກທຳລາຍປ່າໄມ້, ທີ່ດິນປ່າໄມ້ ແລະ ໄຟໃໝ້ລາມປ່າ ສະບັບເລກທີ 16/ຈຂອປ, ລົງວັນທີ 21 ກໍລະກົດ 2023;
- ອີງຕາມ ແຈ້ງການຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ ກ່ຽວກັບ ການເພີ່ມທະວີ ຄວາມເຂັ້ມງວດ ໃນການປ້ອງກັນ ສະກັດກັ້ນໄຟໄໝ້ລາມປ່າ ແລະ ຄວບຄຸມມົນລະພິດທາງອາກາດ (ຝຸ່ນ PM 2.5) ໃນຂອບເຂດທົ່ວປະເທດ ສະບັບເລກທີ 0120/ກສ, ລົງວັນທີ 15 ມັງກອນ 2026;
- ອີງຕາມ ໜັງສືສະເໜີຂອງພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງ ສະບັບເລກທີ 055/ກສຂ.ອປ, ລົງວັນທີ 10 ກຸມພາ 2026.

ເພື່ອຮັບປະກັນ ຄວາມເປັນເອກະພາບ ໃນການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດຄຳສັ່ງ ແລະ ແຈ້ງການຕ່າງໆຂອງສູນກາງ ໃນການເພີ່ມທະວີຄວາມຮັບຜິດຊອບ ໃນການຄຸ້ມຄອງປົກປັກຮັກສາປ່າໄມ້, ທີ່ດິນປ່າໄມ້, ປ້ອງກັນສະກັດກັ້ນ ໄຟໄໝ້ລາມປ່າ ແລະ ຄວບຄຸມມົນລະພິດທາງອາກາດ (ຝຸ່ນ PM 2.5) ໃນຂອບເຂດທົ່ວແຂວງອັດຕະປື ພ້ອມທັງແກ້ໄຂປະກົດການຫຍໍ້ທໍ້ ໃນການບຸກລຸກທຳລາຍປ່າໄມ້, ການຈັບຈອງ, ຊື້-ຂາຍ ທີ່ດິນປ່າໄມ້, ການຖາງປ່າ ແລະ ຈູດປ່າ ໂດຍບໍ່ມີການຄວບຄຸມ ທີ່ຄາດວ່າຈະເກີດຂຶ້ນ ໃນໄລຍະເດືອນ ກຸມພາ ຫາ ເມສາ ທີ່ເປັນຂະບວນແຜ່ລາມ ເປັນບໍລິເວນກວ້າງ, ຊຶ່ງການກະທຳເຫຼົ່ານີ້ ກໍ່ໃຫ້ເກີດມົນລະພິດທາງອາກາດ (ໝອກຄວັນ) ເຊັ່ນ: ຝຸ່ນລະອອງຂະໜາດນ້ອຍກວ່າ 2.5 ໄມຄຣອນ ( ຝຸ່ນ PM 2.5) ເພີ່ມຂຶ້ນຢ່າງຫຼວງຫຼາຍ ທີ່ສົ່ງຜົນກະທົບອັນຮ້າຍແຮງຕໍ່ສຸຂະພາບ ແລະ ການດຳລົງຊີວິດຂອງປະຊາຊົນ.

**ປະທານຄະນະກຳມະການປົກຄອງແຂວງ ອອກ ຄຳສັ່ງ:**

1. ໃຫ້ບັນດາ ພະແນກການ, ອົງການທຽບເທົ່າພະແນກການອ້ອມຂ້າງແຂວງ, ກອງບັນຊາການ ປກຊ-ປກສ, ຄະນະກຳມະການປົກຄອງເມືອງ ແລະ ບ້ານ ເພີ່ມທະວີຄວາມ ເຂັ້ມງວດ ແລະ ເອົາໃຈໃສ່ປະຕິບັດໜ້າທີ່, ຂອບເຂດສິດ ແລະ ຄວາມຮັບຜິດຊອບຂອງຕົນ ໃນການຄຸ້ມຄອງ, ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້ ບໍ່ໃຫ້ຖືກທຳລາຍ ໂດຍຖືເອົາວຽກງານດັ່ງກ່າວ ເປັນໜ້າທີ່ການເມືອງ, ເປັນຕົວຊີ້ວັດ ຕໍ່ຜົນໄດ້ຜົນເສຍ ໃນການນຳພາ-ຊີ້ນຳ ຂອງຄະນະພັກ ແລະ ຄະນະກຳມະການປົກຄອງທຸກຂັ້ນ;
2. ໃຫ້ບັນດາ ພະແນກການ, ອົງການທຽບເທົ່າພະແນກການອ້ອມຂ້າງແຂວງ, ກອງບັນຊາການ ປກຊ-ປກສ, ຄະນະກຳມະການປົກຄອງເມືອງ ແລະ ບ້ານ ເປັນເຈົ້າການ ໂຄສະນາ ເຜີຍແຜ່ນະໂຍບາຍ, ກົດໝາຍ, ລະບຽບການ ກ່ຽວກັບ ການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ດ້ວຍຮູບການ ແລະ ວິທີການຕ່າງໆ ໃຫ້ທົ່ວສັງຄົມຮັບຮູ້, ເຂົ້າໃຈ ແລະ ເປັນເຈົ້າການ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ;
3. ໃຫ້ພະແນກການ, ອົງການທຽບເທົ່າພະແນກການອ້ອມຂ້າງແຂວງ, ກອງບັນຊາການ ປກຊ-ປກສ ແລະ ຄະນະກຳມະການປົກຄອງເມືອງ 05 ຕົວເມືອງ ເປັນເຈົ້າການ ເອົາໃຈໃສ່ສືບຕໍ່ຕິດຕາມ ແລະ ຈັດຕັ້ງປະຕິບັດ ຄຳສັ່ງ ວ່າດ້ວຍ ການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ປ່າໄມ້, ທີ່ດິນປ່າໄມ້, ຕ້ານ ແລະ ສະກັດກັ້ນ ການບຸກລຸກທຳລາຍປ່າໄມ້, ທີ່ດິນປ່າໄມ້ ແລະ ໄຟໄໝ້ລາມປ່າ ສະບັບເລກທີ 16/ຈຂອປ, ລົງວັນທີ 28 ກັນຍາ 2023 ຢ່າງເຂັ້ມງວດ;
4. ໃຫ້ພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງ ເປັນເຈົ້າການ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ກວດກາຄືນເຂດແດນປ່າໄມ້ ແລະ ທີ່ດິນປ່າໄມ້ ແຕ່ລະປະເພດ ໃຫ້ລະອຽດ ໂດຍຕິດພັນກັບວຽກງານຈັດສັນທີ່ດິນ 3 ປະເພດປ່າ, ພ້ອມທັງຮີບຮ້ອນ ດຳເນີນການສຳຫຼວດ ແລະ ວາງແຜນຈັດສັນຄຸ້ມຄອງ, ອອກໃບຕາດິນ, ໃບຢັ້ງຢືນ ການນຳໃຊ້ທີ່ດິນ ຫຼື ໃບຢັ້ງຢືນການພັດທະນາທີ່ດິນ ແລະ ເອກະສານອື່ນ ກ່ຽວກັບ ການຄອບຄອງນຳໃຊ້ທີ່ດິນ, ການເຊົ່າ ຫຼື ສຳປະທານທີ່ດິນ ໃນເຂດທີ່ດິນປ່າໄມ້, ຫາກເຫັນວ່າ ການອອກອະນຸຍາດ ຫຼື ການໄດ້ມາໂດຍບໍ່ຖືກຕ້ອງແມ່ນໃຫ້ລົບລ້າງ ແລະ ດຳເນີນຄະດີ ຕາມກົດໝາຍ ແລະ ລະບຽບການ ໃຫ້ຖືກຕ້ອງ ໂດຍການມີສ່ວນຮ່ວມ ຂອງທຸກພາກສ່ວນ ພ້ອມກັນນີ້ ກໍ່ໃຫ້ສືບຕໍ່ກຳນົດເຂດແດນ, ຕິດປ້າຍ ແລະ ປັກຫຼັກໝາຍ ໃຫ້ຈະແຈ້ງ ແລະ ໃຫ້ດຳເນີນການແບ່ງຄວາມຮັບຜິດຊອບ ໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ທີ່ດິນປ່າໄມ້ ໃຫ້ຄະນະກຳມະການປົກຄອງທ້ອງຖິ່ນ ຢ່າງຈະແຈ້ງ;
5. ໃຫ້ພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງ ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໂຄສະນາເຜີຍແຜ່ ແນະນຳ ຂໍ້ກຳນົດ, ກົດລະບຽບ, ມາດຕະການ ກ່ຽວກັບ ການສະກັດກັ້ນ, ຕ້ານ ແລະ ມອດໄຟປ່າ ຄື: 1) ເກັບກຳຂໍ້ມູນ, ກຳນົດເຂດທີ່ມີຄວາມສ່ຽງ ເພື່ອວາງແຜນສະກັດກັ້ນ ລວມທັງຕິດຕາມ ເຝົ້າລະວັງໃນແຕ່ລະໄລຍະ; 2) ຈັດຕັ້ງໜ່ວຍງານສະເພາະກິດ, ປະກອບວັດຖຸອຸປະກອນ, ພາຫະນະເພື່ອລົງກວດກາລາດຕະເວນ ພ້ອມທັງວາງມາດຕະການແກ້ໄຂ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃຫ້ທັນເວລາ; 3) ຈັດຕັ້ງໜ່ວຍງານໂຄສະນາເຜີຍແຜ່, ແນະນຳເຕັກນິກວິຊາການໃຫ້ປະຊາຊົນ ທີ່ອາໄສຢູ່ໃນ ແລະ ນອກເຂດປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ ບ່ອນທີ່ທຳການຜະລິດ (ເຮັດໄຮ່, ເຮັດສວນ) ແລະ ເຂດທຳມາຫາກິນ ແລະ 4) ໃນກໍລະນີໄຟໄໝ້ປ່າຮຸນແຮງ ແລະ ເປັນບໍລິເວນກວ້າງ, ເຂົ້າຫາໄດ້ຍາກ ຕ້ອງໄດ້ປະສານຫາພາກສ່ວນທີ່ກ່ຽວຂ້ອງ ເປັນຕົ້ນແມ່ນກຳລັງປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ແລະ ແຂວງໃກ້ຄຽງ ເພື່ອຂໍຄວາມຊ່ວຍເຫຼືອໃນການມອດໄຟຢ່າງທັນການ;
6. ໃຫ້ພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງ ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອປ້ອງກັນ ແລະ ຄວບຄຸມມົນລະພິດທາງອາກາດ (ໝອກຄວັນ) ໃນຊ່ວງລະດູແລ້ງຄື: 1) ລົງສ້າງຈິດສຳນຶກ, ລາຍງານສະພາບ, ປະຊາສຳພັນຂໍ້ມູນຂ່າວສານກ່ຽວກັບ ມົນລະພິດທາງອາກາດ (ໝອກຄວັນ) ໃຫ້ແກ່ປະຊາຊົນ, ຮ

ສັງຄົມ ແລະ ສະຖານທີ່ສຶກສາ ໄດ້ຮັບຊາບຢ່າງກວ້າງຂວາງ; 2) ສັງລວມຂໍ້ມູນ, ຕິດຕາມ, ປ້ອງກັນ ແລະ ຄວບຄຸມແຫຼ່ງກຳເນີດ ມົນລະພິດທາງອາກາດ ຮ່ວມກັບຂະແໜງການທີ່ກ່ຽວຂ້ອງ ແລະ 3) ເຜີຍແຜ່ ຄຳສັ່ງສະບັບນີ້ ແລະ ຜັນຂະຫຍາຍເປັນແຈ້ງການສະເພາະ ເພື່ອຫ້າມຢ່າງເດັດຂາດ ການຈູດສິ່ງເສດເຫຼືອທຸກປະເພດ ໃນພື້ນທີ່ກາງແຈ້ງ, ລວມທັງເຂດທີ່ດິນກະສິກຳ, ປ່າໄມ້, ທີ່ຢູ່ອາໄສ (ຄິວເຮືອນ) ແລະ ສະຖານທີ່ກຳຈັດສິ່ງເສດເຫຼືອ;

7. ໃຫ້ຄະນະກຳມະການປົກຄອງເມືອງ, ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ 05 ຕົວເມືອງ ເປັນເຈົ້າການສົມທົບກັບ ພາກສ່ວນທີ່ກ່ຽວຂ້ອງ ແລະ ບ້ານ ດຳເນີນການກວດກາ, ເກັບກຳຂໍ້ມູນ ແລະ ແກ້ໄຂ ການບຸກລຸກປ່າໄມ້, ການຈັບຈອງ, ຊື້-ຂາຍ ທີ່ດິນປ່າໄມ້ ແລະ ການດຳເນີນກິດຈະການ ຫຼື ທຸລະກິດ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງຢູ່ ໃນເຂດປ່າໄມ້ ແລະ ທີ່ດິນປ່າໄມ້, ກໍລະນີບໍ່ໄດ້ ຮັບອະນຸຍາດ ຫຼື ເຄື່ອນໄຫວບໍ່ຖືກຕ້ອງ ແມ່ນໃຫ້ຢຸດຕິ, ຍຸບເລີກ, ຮື້ຖອນ, ປະຕິບັດມາດຕະການ ແລະ ດຳເນີນ ຄະດີຕໍ່ຜູ້ລະເມີດຕາມກົດໝາຍ ຢ່າງເຂັ້ມງວດ;
8. ໃຫ້ຄະນະກຳມະການປົກຄອງເມືອງ ແລະ ບ້ານ ເປັນເຈົ້າການ ແລະ ເຂັ້ມງວດ ໃນການປ້ອງກັນ, ສະກັດກັ້ນການຈູດປ່າ ແບບຊະຊາຍ, ໃນກໍລະນີ ຫາກເກີດມີໄຟໄໝ້ປ່າ ຢູ່ທ້ອງຖິ່ນໃດ ແມ່ນມອບໃຫ້ທ້ອງຖິ່ນນັ້ນ ເປັນເຈົ້າການ ຈັດຕັ້ງກຳລັງ ພ້ອມທັງວັດຖຸປະກອນ ເພື່ອດັບມອດ ໃຫ້ທັນການ, ຮັບປະກັນ ບໍ່ໃຫ້ເກີດຄວາມເສຍຫາຍຮ້າຍແຮງ ແລະ ແຜ່ລາມ ເປັນບໍລິເວນກວ້າງ;
9. ໃຫ້ຄະນະກຳມະການຄຸ້ມຄອງໄພພິບັດທຸກຂັ້ນຖືເອົາວຽກງານປ້ອງກັນ ໄຟໄໝ້ລາມປ່າ ເປັນວຽກງານບຸລິມະສິດໜຶ່ງ ໃນຂົງເຂດໄພພິບັດຂອງແຂວງ ໂດຍການຈັດສັນງົບປະມານ, ກະກຽມວັດຖຸອຸປະກອນທີ່ຈຳເປັນ ໃນການສະກັດກັ້ນ, ຕ້ານ ແລະ ດັບມອດໄຟໄໝ້ລາມປ່າ ໃຫ້ຢູ່ໃນທ່າກຽມພ້ອມ ເພື່ອສະໜອງໃຫ້ທັນເວລາ;
10. ຫ້າມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຈູດປ່າຊະຊາຍ ເພື່ອລ່າສັດປ່າ, ປູກພືດ, ເປັນສະຖານທີ່ລ້ຽງສັດ ຫຼື ເພື່ອເປົ້າໝາຍອື່ນ ກໍລະນີພົບເຫັນ ຜູ້ລະເມີດ ຕ້ອງຮັບຜິດຊອບ ຕໍ່ຜົນເສຍຫາຍທີ່ຕົນໄດ້ສ້າງຂຶ້ນ ແລະ ຈະຖືກດຳເນີນຄະດີ ຕາມກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ;
11. ໃຫ້ບັນດາ ພະແນກອ້ອມຂ້າງແຂວງ, ກອງບັນຊາການ ປກຊ-ປກສ, ຄະນະກຳມະການປົກຄອງເມືອງ ໃນຂອບເຂດທົ່ວແຂວງ ຄົ້ນຄວ້າກຳແໜ້ນ ຄຳສັ່ງ ສະບັບນີ້ ພ້ອມທັງຈັດຕັ້ງ ເຜີຍແຜ່ ແລະ ເຊື່ອມຊຶມ ໃນສັງຄົມໃຫ້ມີການຮັບຮູ້ ແລະ ຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນ;
12. ຄຳສັ່ງ ສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານຄະນະກຳມະການປົກຄອງແຂວງ**

ທະນູໄຊ ບັນຊາລິດ

ບ່ອນນຳສົ່ງ:

| | |
|---|---|
| – ຫ້ອງວ່າການແຂວງ | 01 ສະບັບ; |
| – ຂະແໜງການອ້ອມຂ້າງແຂວງ | 01 ສະບັບ; |
| – ກອງບັນຊາການ ປກຊ-ປກສ | 01 ສະບັບ; |
| – ຫ້ອງວ່າການເມືອງ 5 ເມືອງລະ | 01 ສະບັບ; |
| – ເກັບສຳເນົາໄວ້ | 01 ສະບັບ. |